**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0888 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 22 ພຶດສະພາ 2025

# ຂໍ້ຕົກລົງ
# ວ່າດ້ວຍການກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ

- ອີງຕາມ ກົດໝາຍ ວ່າດ້ວຍມາດຕະຖານ ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມມາດຕະຖານ ແລະ ວັດແທກ ສະບັບເລກທີ 1881/ກມວ, ລົງວັນທີ 19 ພຶດສະພາ 2025.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢູ່ ສປປ ລາວ ເພື່ອໃຫ້ຖືກຕ້ອງສອດຄ່ອງກັບມາດຕະຖານແຫ່ງຊາດ. ແນໃສ່ຮັບປະກັນທາງດ້ານຄຸນນະພາບ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ດຳເນີນທຸລະກິດ, ຜູ້ຊົມໃຊ້ ແລະ ລັດ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ**

ການກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ແມ່ນການດຳເນີນການກວດສອບວັດຖຸມີຄ່າ ທີ່ເປັນຮູບປະພັນ ແລະ ແທ່ງ ເພື່ອກວດສອບປະລິມານຄວາມບໍລິສຸດ, ນ້ຳໜັກ, ອົງປະກອບໂລຫະ ແລະ ອະໂລຫະ ເພື່ອຢັ້ງຢືນຄຸນນະພາບຂອງວັດຖຸມີຄ່າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນ ຂໍ້ຕົກລົງ ສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ຜະລິດຕະພັນວັດຖຸມີຄ່າ** ໝາຍເຖິງວັດຖຸ ຫຼື ສິ່ງຂອງທີ່ມີຄ່າເຊັ່ນ: ເງິນ, ຄຳ, ທອງ, ເພັດ, ໄຂ່ມຸກ, ແກ້ວປະເສີດ, ຄຳຂາວ ແລະ ເຄື່ອງອື່ນໆ ທີ່ເຮັດດ້ວຍໂລຫະ ແລະ ອະໂລຫະ;
2. **ທຸລະກິດວັດຖຸມີຄ່າ** ໝາຍເຖິງ ການດຳເນີນທຸລະກິດ ການຜະລິດ, ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍວັດຖຸມີຄ່າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

3. **ເຄື່ອງໝາຍຂອງຜະລິດຕະພັນວັດຖຸມີຄ່າ** ໝາຍເຖິງ ສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນ ທີ່ນໍາໃຊ້ກັບຜະລິດຕະພັນວັດຖຸມີຄ່າ ເພື່ອສະແດງເຖິງລັກສະນະຂອງຜູ້ປະກອບການ;

4. **ໃບຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ** ໝາຍເຖິງ ເອກະສານທີ່ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ທີ່ຖືກຕ້ອງສອດຄ່ອງກັບມາດຕະຖານແຫ່ງຊາດ;

5. **ຄວາມບໍລິສຸດ** ໝາຍເຖິງ ຈໍານວນອັດຕາສ່ວນປະສົມຂອງໂລຫະ ຫຼື ອະໂລຫະໂດຍມວນສານ;

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງ ສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດໍາເນີນການຜະລິດ, ນໍາເຂົ້າ-ສົ່ງອອກ ແລະ ຈໍາໜ່າຍ ຜະລິດຕະພັນວັດຖຸມີຄ່າ ຢູ່ ສປປ ລາວ.

## ໝວດທີ 2
## ການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ

**ມາດຕາ 5 ການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດໍາເນີນການຜະລິດ, ປຸງແຕ່ງ, ແປຮູບ, ນໍາເຂົ້າ ແລະ ສົ່ງອອກ ຕ້ອງໄດ້ຂຶ້ນທະບຽນ ຜູ້ນໍາເຂົ້າ-ສົ່ງອອກ, ຜູ້ຜະລິດ, ຜູ້ຈໍາໜ່າຍ ແລະ ຕົວແທນຈໍາໜ່າຍ ຂອງຜະລິດຕະພັນວັດຖຸມີຄ່າ ຈາກກົມມາດຕະຖານ ແລະ ວັດແທກ.

**ມາດຕາ 6 ຂັ້ນຕອນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ**

ການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ ປະກອບດ້ວຍຂັ້ນຕອນດັ່ງນີ້:

1. ຍື່ນຄໍາຮ້ອງ ຕາມແບບພິມຕໍ່ກົມມາດຕະຖານ ແລະ ວັດແທກ, ກະຊວງອຸດສາຫະກໍາ ແລະ ການຄ້າ;
2. ການພິຈາລະນາຄໍາຮ້ອງຂໍຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ;
3. ການອອກໃບຢັ້ງຢືນ ຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ.

**ມາດຕາ 7 ເອກະສານປະກອບຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ**

ການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງ ຂໍຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ ຕາມແບບພິມ ທີ່ກົມມາດຕະຖານ ແລະ ວັດແທກ ກໍານົດ;
2. ສໍາເນົາໃບທະບຽນວິສາຫະກິດ;
3. ໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ ແລະ ສົ່ງອອກ ວັດຖຸມີຄ່າ (ສໍາລັບຜູ້ນໍາເຂົ້າ ແລະ ສົ່ງອອກ);
4. ໃບອະນຸຍາດດໍາເນີນທຸລະກິດຈໍາໜ່າຍວັດຖຸມີຄ່າ (ສໍາລັບຜູ້ຈໍາໜ່າຍ);
5. ໃບຢັ້ງຢືນເຄື່ອງມືກວດສອບວັດຖຸມີຄ່າເຊັ່ນ: ເຄື່ອງ X-ray fluorescence (ສໍາລັບຜູ້ຜະລິດ, ຜູ້ຈໍາໜ່າຍ).

**ມາດຕາ 8 ການພິຈາລະນາຢັ້ງຢືນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງຄົບຖ້ວນແລ້ວ ຕ້ອງພິຈາລະນາອອກໃບຢັ້ງຢືນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ ພາຍໃນ ຫ້າວັນ ທາງລັດຖະການ ກໍລະນີ ເອກະສານບໍ່ຖືກຕ້ອງຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ສະເໜີຮັບຊາບ ພາຍໃນກໍານົດເວລາ ສາມວັນ ທາງລັດຖະການ.

**ມາດຕາ 9 ອາຍຸ ແລະ ການຕໍ່ອາຍຸ ໃບຢັ້ງຢືນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ**

ໃບຢັ້ງຢືນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ ມີອາຍຸ ໜຶ່ງປີ ແລະ ສາມາດຕໍ່ໄດ້.

ການຕໍ່ອາຍຸໃບຢັ້ງຢືນ ໃຫ້ຍື່ນຄຳຮ້ອງຕໍ່ ກົມມາດຕະຖານ ແລະ ວັດແທກ ຢ່າງໜ້ອຍ ສາມສິບ ວັນ ກ່ອນວັນໝົດອາຍຸການນຳໃຊ້ ໃຫ້ປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຂໍຕໍ່ໃບຢັ້ງຢືນຂຶ້ນທະບຽນຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ ຕາມແບບພິມ ທີ່ກົມມາດຕະຖານ ແລະ ວັດແທກ ກຳນົດ;
2. ໃບຢັ້ງຢືນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ ສະບັບຕົ້ນ.

**ມາດຕາ 10 ການໂຈະ ໃບຢັ້ງຢືນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ**

ຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ ຈະຖືກໂຈະ ກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີໂຈະດ້ວຍຄວາມສະໝັກໃຈ ຊຶ່ງຕ້ອງສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ກ່ອນການໂຈະກິດຈະການດັ່ງກ່າວ ພາຍໃນ ຫົກສິບ ວັນ;
2. ນຳໃຊ້ໃບຢັ້ງຢືນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ ໝົດອາຍຸ.

**ມາດຕາ 11 ການຍົກເລີກ ໃບຢັ້ງຢືນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ**

ຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງດັ່ງນີ້:

1. ສະເໜີຍົກເລີກດ້ວຍຄວາມສະໝັກໃຈ ຊຶ່ງຕ້ອງສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ກ່ອນການໂຈະກິດຈະການດັ່ງກ່າວ ພາຍໃນ ຫົກສິບ ວັນ;
2. ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍຫຼັງທີ່ຖືກສັ່ງໂຈະ ແລະ ຍັງສືບຕໍ່ເຄື່ອນໄຫວດຳເນີນກິດຈະການໃນເວລາທີ່ຖືກສັ່ງໂຈະ;
3. ຜູ້ປະກອບການ ບໍ່ຕໍ່ໃບຢັ້ງຢືນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ ພາຍຫຼັງໝົດອາຍຸ ພາຍໃນ ສາມສິບ ວັນ;
4. ມີຄຳຕັດສິນຂອງສານປະຊາຊົນ.

## ໝວດທີ 3
## ປະເພດ, ສະຫຼາກ ແລະ ເຄື່ອງໝາຍ ຂອງຜະລິດຕະພັນອັດຖຸມີຄ່າ

**ມາດຕາ 12 ປະເພດຂອງຜະລິດຕະພັນອັດຖຸມີຄ່າ**

ຜະລິດຕະພັນອັດຖຸມີຄ່າ ທີ່ດຳເນີນການກວດສອບມີ ສອງ ປະເພດ ຄື:

1. ຜະລິດຕະພັນອັດຖຸມີຄ່າ ທີ່ເປັນຮູບປະພັນ;
2. ຜະລິດຕະພັນອັດຖຸມີຄ່າ ທີ່ເປັນແທ່ງ.

**ກ. ຜະລິດຕະພັນອັດຖຸມີຄ່າທີ່ເປັນຮູບປະພັນ ທີ່ຕ້ອງໄດ້ກວດສອບຄຸນນະພາບ ປະກອບມີ:** ຄຳຮູບປະພັນທຸກຊະນິດ, ຄຳຂາວຮູບປະພັນທຸກຊະນິດ, ຄຳປະສົມຮູບປະພັນທຸກຊະນິດ, ເພັດ, ພອຍ, ແກ້ວປະເສີດ, ໄຂ່ມຸກ ແລະ ວັດຖຸມີຄ່າທີ່ເປັນຮູບປະພັນອື່ນໆ.

**ຂ. ຜະລິດຕະພັນອັດຖຸມີຄ່າທີ່ເປັນແທ່ງ ທີ່ຕ້ອງໄດ້ກວດສອບຄຸນນະພາບ ປະກອບມີ:** ຄຳແທ່ງ, ຄຳແທ່ງປະສົມ ແລະ ຄຳແທ່ງ ທຸກຊະນິດ; ເງິນແທ່ງ, ເງິນແທ່ງປະສົມ ແລະ ເງິນແທ່ງທຸກຊະນິດ; ທອງແທ່ງ, ທອງແທ່ງປະສົມ ແລະ ທອງແທ່ງທຸກຊະນິດ ແລະ ຜະລິດຕະພັນອັດຖຸມີຄ່າທີ່ເປັນແທ່ງອື່ນໆ.

**ມາດຕາ 13 ເຄື່ອງໝາຍຂອງຜະລິດຕະພັນອັດຖຸມີຄ່າ, ສະຫຼາກ, ສະຕິກເກີ້ ແລະ ກາປ້ຳ**

ເຄື່ອງໝາຍຂອງຜະລິດຕະພັນອັດຖຸມີຄ່າ, ສະຫຼາກ, ສະຕິກເກີ້ ແລະ ກາປ້ຳ ຕ້ອງມີສະຫຼາກພິມເປັນພາສາລາວ ຊຶ່ງຕ້ອງລະບຸຂໍ້ຄວາມໃນສະຫຼາກ ຊັດເຈນ, ອ່ານງ່າຍ, ເຂົ້າໃຈແຈ້ງ ແລະ ບໍ່ສາມາດລຶບໄດ້. ສຳລັບສະຫຼາກທີ່ເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີເນື້ອໃນສອດຄ່ອງກັນ ໂດຍມີຂໍ້ມູນຕົ້ນຕໍ ດັ່ງນີ້:

1. ເຄື່ອງໝາຍຂອງຜະລິດຕະພັນອັດຖຸມີຄ່າ: ສັນຍາລັກຂອງໂຮງງານຜະລິດ, ປີຜະລິດ, ປະລິມານຄວາມບໍລິສຸດ;
2. ສະຫຼາກ: ເຄື່ອງໝາຍທີ່ລະບຸຄວາມບໍລິສຸດຂອງອັດຖຸມີຄ່າເປັນເປີເຊັນ, ນ້ຳໜັກສຸດທິ;
3. ສະຕິກເກີ້ (ສຳລັບຫຼຽນ ແລະ ແທ່ງ): ເລກລະຫັດ (Serial number), ປະລິມານຄວາມບໍລິສຸດຂອງອັດຖຸມີຄ່າເປັນເປີເຊັນ, ຈຳນວນ, ນ້ຳໜັກສຸດທິ;
4. ກາປ້ຳ (ສຳລັບແທ່ງທີ່ມີນ້ຳໜັກ 1 Kg): ສັນຍາລັກ (ຜູ້ຈຳໜ່າຍ), ສັນຍາລັກ (ຜູ້ຜະລິດ), ເຄື່ອງໝາຍຮັບຮອງມາດຕະຖານແຫ່ງຊາດ (Hallmark), ຄວາມບໍລິສຸດ, ນ້ຳໜັກສຸດທິ, ເລກລະຫັດ (Serial number).

## ໝວດທີ 4
## ການສະເໜີກວດສອບ ແລະ ການຢັ້ງຢືນຄຸນນະພາບ ຜະລິດຕະພັນອັດຖຸມີຄ່າ

**ມາດຕາ 14 ການສະເໜີກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນອັດຖຸມີຄ່າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດສະເໜີກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນອັດຖຸມີຄ່າ ຕໍ່ກົມມາດຕະຖານ ແລະ ວັດແທກ ຫຼື ໜ່ວຍງານກວດສອບ ແລະ ຢັ້ງຢືນຜະລິດຕະພັນອັດຖຸມີຄ່າ ຕ້ອງປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
2. ໃບຢັ້ງຢືນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ;
3. ໃບຢັ້ງຢືນຄຸນນະພາບຕົ້ນທາງ (ສຳລັບນຳເຂົ້າ ແລະ ສົ່ງອອກ ອັດຖຸມີຄ່າ).

**ມາດຕາ 15 ການພິຈາລະນາເອກະສານອອກໃບຢັ້ງຢືນຄຸນນະພາບຜະລິດຕະພັນອັດຖຸມີຄ່າ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້, ກົມມາດຕະຖານ ແລະ ວັດແທກ ຫຼື ໜ່ວຍງານກວດສອບ ແລະ ຢັ້ງຢືນຜະລິດຕະພັນອັດຖຸມີຄ່າ ຕ້ອງດຳເນີນການກວດສອບຄຸນນະພາບອັດຖຸມີຄ່າ ຕາມຮູບແບບ ແລະ ຫຼັກການການກວດສອບຄຸນນະພາບອັດຖຸມີຄ່າ ທີ່ໄດ້ກຳນົດໄວ້ໃນມາດຕາ 16 ແລະ 17 ຂອງຂໍ້ຕົກລົງສະບັບນີ້.

ການພິຈາລະນາອອກໃບຢັ້ງຢືນຄຸນນະພາບອັດຖຸມີຄ່າ ທີ່ຜະລິດ ແລະ ຈຳໜ່າຍ ພາຍໃນ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

ການພິຈາລະນາອອກໃບຢັ້ງຢືນຄຸນນະພາບອັດຖຸມີຄ່າ ທີ່ນຳເຂົ້າ ແລະ ສົ່ງອອກ ພາຍໃນ ໜຶ່ງ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

## ໝວດທີ 5
## ຮູບແບບການກວດສອບ ແລະ ຫຼັກການກວດສອບຄຸນນະພາບ ຜະລິດຕະພັນວັດຖຸມີຄ່າ

**ມາດຕາ 16 ຮູບແບບການກວດສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ**

ການກວດສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ ມີ ຫ້າ ຮູບແບບ ດັ່ງນີ້:

1. ກວດສອບຜູ້ນໍາເຂົ້າ-ສົ່ງອອກ (ສໍາລັບວັດຖຸມີຄ່າ, ຄໍາແທ່ງ ແລະ ຄໍາແທ່ງປະສົມ, ເງິນແທ່ງ ແລະ ທອງແທ່ງ);
2. ກວດສອບຜູ້ຜະລິດເປັນປົກກະຕິ ຕາມແຜນການຜະລິດ;
3. ກວດສອບຜູ້ຈໍາໜ່າຍ, ຕົວແທນຈໍາໜ່າຍ ປະຈໍາທຸກໆ ຫົກ ເດືອນ;
4. ກວດສອບຜູ້ນໍາເຂົ້າ-ສົ່ງອອກ, ຜູ້ຜະລິດ, ຜູ້ຈໍາໜ່າຍ ແລະ ຕົວແທນຈໍາໜ່າຍ ເປັນການກວດສອບນອກແຜນ. ກໍລະນີຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດສອບຮັບຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ສິບສອງຊົ່ວໂມງ;
5. ກວດສອບ ແບບກະທັນຫັນ (ສຸກເສີນ) ຊຶ່ງຮູບແບບນີ້ຈະບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດສອບຮູ້ລ່ວງໜ້າ.

**ມາດຕາ 17 ຫຼັກການກວດສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ**

ການດໍາເນີນການກວດສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ການດໍາເນີນການກວດສອບ ທຸກຄັ້ງທີ່ເຈົ້າໜ້າທີ່ໄປກວດກາ ຕ້ອງມີບັດພະນັກງານ ທີ່ອອກໃຫ້ໂດຍ ກົມມາດຕະຖານ ແລະ ວັດແທກ, ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕາມການມອບໝາຍ;
2. ການກວດສອບສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ ຫາກເຫັນວ່າຜົນການກວດສອບຖືກຕ້ອງສອດຄ່ອງຕາມມາດຕະຖານແຫ່ງຊາດ, ພະນັກງານທີ່ກ່ຽວຂ້ອງ ຕ້ອງອອກໃບຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ;
3. ການກວດສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ ທີ່ນໍາເຂົ້າ ແລະ ສົ່ງອອກ ຫາກຜົນການກວດສອບບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພະນັກງານທີ່ກ່ຽວຂ້ອງ ຕ້ອງເຮັດບົດບັນທຶກ ແລະ ສັ່ງໂຈະການນໍາເຂົ້າ ແລະ ສົ່ງອອກວັດຖຸມີຄ່າ ເພື່ອລາຍງານຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງຮັບຊາບ;
4. ສໍາລັບ ການຜະລິດ ແລະ ຈໍາໜ່າຍວັດຖຸມີຄ່າ ຫາກຜົນການກວດສອບບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພະນັກງານທີ່ກ່ຽວຂ້ອງ ຕ້ອງໄດ້ເຮັດບົດບັນທຶກ ແລະ ຈະບໍ່ອອກໃບຢັ້ງຢືນຄຸນນະພາບວັດຖຸມີຄ່າ ຈົນກວ່າຈະຜະລິດ ຖືກຕ້ອງສອດຄ່ອງຕາມມາດຕະຖານດັ່ງກ່າວ.

ກໍລະນີ ຜູ້ດໍາເນີນທຸລະກິດວັດຖຸມີຄ່າ ເຫັນວ່າຜົນການກວດສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ ຂອງກົມມາດຕະຖານ ແລະ ວັດແທກ ຫຼື ໜ່ວຍງານກວດສອບ ແລະ ຢັ້ງຢືນຜະລິດຕະພັນວັດຖຸມີຄ່າ ບໍ່ສອດຄ່ອງກັບມາດຕະຖານແຫ່ງຊາດ, ຜູ້ດໍາເນີນທຸລະກິດວັດຖຸມີຄ່າ ສາມາດນໍາໄປກວດສອບ ແລະ ການຢັ້ງຢືນ ຈາກຫ້ອງກວດຄຸນນະພາບທີ່ໄດ້ຮັບມາດຕະຖານສາກົນ ເພື່ອສົ່ງໃຫ້ກົມມາດຕະຖານ ແລະ ວັດແທກ ພິຈາລະນາຄືນໃໝ່.

## ໝວດທີ 6
## ສິດ ແລະ ພັນທະຂອງຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ

**ມາດຕາ 18 ສິດ ຂອງຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ**

ຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ ມີສິດ ດັ່ງນີ້:

1. ບໍລິການ, ໂຄສະນາເຜີຍແຜ່ຄຸນນະພາບຜະລິດຕະພັນວັດຖຸມີຄ່າ ໃຫ້ຖືກຕ້ອງຕາມຄວາມເປັນຈິງ ພາຍຫຼັງໄດ້ຮັບການກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ;

2. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ກ່ຽວກັບການດຳເນີນທຸລະກິດວັດຖຸມີຄ່າ;

3. ປັບປຸງການບໍລິການຂອງຕົນ ແລະ ຮ້ອງຂໍຄວາມເປັນທຳ ຕໍ່ອົງການຄຸ້ມຄອງລັດທີ່ກ່ຽວຂ້ອງ ຫາກເຫັນວ່າການກວດກາຄຸນນະພາບຜະລິດຕະພັນວັດຖຸມີຄ່ານັ້ນ ບໍ່ໄດ້ຮັບຄວາມເປັນທຳ;

4. ສະເໜີໃຫ້ກົມມາດຕະຖານ ແລະ ວັດແທກ ຫຼື ໜ່ວຍງານກວດກາຄຸນນະພາບຜະລິດຕະພັນວັດຖຸມີຄ່າ ປະຈຳແຕ່ລະຈຸດກວດສອບຄືນ ຖ້າເຫັນວ່າຄຸນນະພາບຜະລິດຕະພັນວັດຖຸມີຄ່າບໍ່ສອດຄ່ອງກັບມາດຕະຖານແຫ່ງຊາດ;

5. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 19 ພັນທະ ຂອງຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ**

ຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ ມີພັນທະ ດັ່ງນີ້:

1. ຜູ້ດຳເນີນທຸລະກິດວັດຖຸມີຄ່າກ່ອນການນຳເຂົ້າ ແລະ ຈຳໜ່າຍວັດຖຸມີຄ່າ ທີ່ຕ້ອງໄດ້ຮັບອະນຸຍາດ;

2. ຕ້ອງໄດ້ຮັບການກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ຈາກກົມມາດຕະຖານ ແລະ ວັດແທກ ຫຼື ໜ່ວຍງານກວດກາຄຸນນະພາບຜະລິດຕະພັນ-ສິນຄ້າວັດຖຸມີຄ່າ ປະຈຳດ່ານເຂົ້າ-ອອກ ເພື່ອໃຫ້ສອດຄ່ອງກັບມາດຕະຖານແຫ່ງຊາດ;

3. ຮັບປະກັນທາງດ້ານຄຸນນະພາບ ແລະ ປະລິມານຜະລິດຕະພັນວັດຖຸມີຄ່າ ທີ່ຕົນສະໜອງໃຫ້ບໍລິສັດຈຳໜ່າຍພາຍໃນ ແລະ ລູກຄ້າຂອງຕົນ;

4. ຈຳໜ່າຍຜະລິດຕະພັນວັດຖຸມີຄ່າ ທີ່ມີຄຸນນະພາບ ແລະ ຮັບປະກັນດ້ານປະລິມານຕາມມາດຕະຖານແຫ່ງຊາດ ກຳນົດ;

5. ການຊື້ຂາຍວັດຖຸມີຄ່າ ຕ້ອງໄດ້ນຳໃຊ້ຊິງຊັ່ງທັນສະໄໝ ໂດຍທີ່ມີຜູ້ຊື້, ຜູ້ຂາຍ ແລະ ບຸກຄົນທີ່ກ່ຽວຂ້ອງກັບການຊັ່ງຊິງທຸກຄັ້ງ ສາມາດອ່ານຄ່ານ້ຳໜັກໄດ້ຊັດເຈນພ້ອມກັນ;

6. ຊິງຊັ່ງທີ່ໃຊ້ຊັ່ງວັດຖຸມີຄ່າຕ້ອງເປັນຊິງຊັ່ງຂັ້ນສອງທີ່ມີຄ່າການເຕັ້ນ e ບໍ່ເກີນ 0.1 g ແລະ ມີຄ່າລະອຽດ d=0.01 g, ຊິງຊັ່ງດັ່ງກ່າວແມ່ນຕ້ອງໄດ້ຮັບການກວດສອບ ແລະ ຢັ້ງຢືນຄວາມຊັດເຈນຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງຕາມລະບຽບການ;

7. ຮັບຜິດຊອບທຸກຜົນເສຍຫາຍທີ່ເກີດຂຶ້ນ ຍ້ອນຜະລິດຕະພັນວັດຖຸມີຄ່າ ບໍ່ສອດຄ່ອງກັບມາດຕະຖານແຫ່ງຊາດ ຕາມກົດໝາຍ ແລະ ລະບຽບການ;

8. ຕ້ອງສະໜອງເອກະສານທີ່ກ່ຽວຂ້ອງໃຫ້ຄົບຖ້ວນ ກ່ຽວກັບການສະເໜີຂໍກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ, ແລະ ຈຳໜ່າຍ;

9. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ເຈົ້າໜ້າທີ່ ທີ່ໄປກວດກາຄຸນນະພາບວັດຖຸມີຄ່າ ໃນແຕ່ລະຄັ້ງ;

10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 20 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳດັ່ງນີ້:

1. ສ້າງອຸປະສັກກີດຂວາງ ການປະຕິບັດໜ້າທີ່ກວດສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ ຂອງເຈົ້າໜ້າທີ່ລັດ;

2. ໂຄສະນາ ແລະ ສົ່ງເສີມຜະລິດຕະພັນວັດຖຸມີຄ່າ ທີ່ບໍ່ໄດ້ຄຸນນະພາບ;

3. ຊ່ວຍເຫຼືອ ປົກປ້ອງຜູ້ລະເມີດຂໍ້ຕົກລົງສະບັບນີ້;

4. ປົດບັງ ເຊື່ອງອຳການກະທຳ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 21 ຂໍ້ຫ້າມສຳລັບຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ**

ຫ້າມ ຜູ້ປະກອບການຜະລິດຕະພັນອັດຖຸມີຄ່າ ມີພຶດຕິກຳ ດັ່ງນີ້:

1. ຜະລິດ, ນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍຜະລິດຕະພັນອັດຖຸມີຄ່າ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ບໍ່ໄດ້ຜ່ານການກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນອັດຖຸມີຄ່າ;
2. ຕັດກໍ່ວ ແລະ ດັດແປງຊີງຊັ່ງອັດຖຸມີຄ່າ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມມາດຕະຖານ ແລະ ວັດແທກ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ດັດແປງ ແລະ ນຳໃຊ້ເຄື່ອງກວດສອບຜະລິດຕະພັນອັດຖຸມີຄ່າ ທີ່ບໍ່ໄດ້ຮັບການຢັ້ງຢືນຈາກກົມມາດຕະຖານ ແລະ ວັດແທກ;
4. ສ້າງອຸປະສັກກີດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ໄປກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນອັດຖຸມີຄ່າ;
5. ໃຫ້ສິນບົນ ແລະ ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ລົງກວດສອບ;
6. ປອມແປງເອກະສານ ການຢັ້ງຢືນຄຸນນະພາບຜະລິດຕະພັນອັດຖຸມີຄ່າ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 22 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ໄປກວດສອບຄຸນນະພາບ ຜະລິດຕະພັນອັດຖຸມີຄ່າ ໂດຍບໍ່ມີບັດພະນັກງານ ແລະ ບໍ່ໄດ້ຮັບການແຕ່ງຕັ້ງໃຫ້ໄປປະຕິບັດໜ້າທີ່;
2. ປະຕິບັດໜ້າທີ່ຕໍ່ຜູ້ດຳເນີນທຸລະກິດ ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ ແລະ ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
3. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກຂອງຕົນ;
4. ກົດໜ່ວງຖ່ວງດຶງ ແລະ ແກ່ຍາວເວລາການພິຈາລະນາເອກະສານ;
5. ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ເປີດເຜີຍຄວາມລັບທາງທຸລະກິດ;
6. ຂໍເອົາ, ທວງເອົາ, ຮັບສິນບົນ ຫຼື ຫາຜົນປະໂຫຍດອື່ນ ໂດຍບໍ່ຖືກຕ້ອງ;
7. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບ ຜະລິດຕະພັນອັດຖຸມີຄ່າ

**ມາດຕາ 23 ການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນອັດຖຸມີຄ່າ**

ການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນອັດຖຸມີຄ່າ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ປະກອບມີ ດັ່ງນີ້:

1. ກົມມາດຕະຖານ ແລະ ວັດແທກ;
2. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ໜ່ວຍງານກວດສອບ ແລະ ຢັ້ງຢືນຜະລິດຕະພັນອັດຖຸມີຄ່າ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງກົມມາດຕະຖານ ແລະ ວັດແທກ**

ກົມມາດຕະຖານ ແລະ ວັດແທກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ;

3. ເກັບຕົວຢ່າງວັດຖຸມີຄ່າ ໄປກວດສອບຄຸນນະພາບ ເພື່ອໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ;

4. ພິຈາລະນາອອກ, ການຕໍ່, ໂຈະ ແລະ ຍົກເລີກ ການຢັ້ງຢືນການຂຶ້ນທະບຽນຜູ້ປະກອບການຜະລິດຕະພັນວັດຖຸມີຄ່າ

5. ພິຈາລະນາອອກໃບຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ;

6. ໂຈະຊົ່ວຄາວການຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຜະລິດຕະພັນວັດຖຸມີຄ່າ ພາຍຫຼັງໄດ້ຮັບການລາຍງານຈາກໜ່ວຍງານກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ ວັດຖຸມີຄ່າ ເຫັນວ່າບໍ່ສອດຄ່ອງກັບມາດຕະຖານແຫ່ງຊາດ ເພື່ອລາຍງານຂໍທິດຊີ້ນຳຄະນະນຳກະຊວງ ພິຈາລະນາແກ້ໄຂ;

7. ການກວດສອບຄຸນນະພາບວັດຖຸມີຄ່າ ຕາມແຜນປົກກະຕິ ຫຼື ກວດແບບກະທັນຫັນ;

8. ສະກັດກັ້ນ, ປັບໃໝ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມາດຕະຖານ ທີ່ກ່ຽວຂ້ອງກັບການກວດສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ;

9. ເກັບຮັກສາຂໍ້ມູນ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ;

10. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກວດສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ ໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ;

11. ເກັບຄ່າທຳນຽມ ແລະ ຄ່າບໍລິການ ໃນການກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ;

12. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຂັ້ນເທິງຮັບຊາບ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

2. ປະສານສົມທົບກັບກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ;

3. ຕິດຕາມ, ກວດກາ ແລະ ສະໜອງຂໍ້ມູນ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ;

4. ລາຍງານສະພາບການຕິດຕາມ, ກວດກາ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ ໜ່ວຍງານກວດສອບ ແລະ ຢັ້ງຢືນຜະລິດຕະພັນວັດຖຸມີຄ່າ**

ໜ່ວຍງານກວດສອບ ແລະ ຢັ້ງຢືນຜະລິດຕະພັນວັດຖຸມີຄ່າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

2. ເກັບຕົວຢ່າງຜະລິດຕະພັນວັດຖຸມີຄ່າ ໄປກວດສອບຄຸນນະພາບ ເພື່ອຢັ້ງຢືນຄວາມສອດຄ່ອງຕາມມາດຕະຖານແຫ່ງຊາດກຳນົດ;

3. ອອກໃບຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ກ່ອນການນຳເຂົ້າ ແລະ ສົ່ງອອກ;

4. ພາຍຫຼັງການກວດສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ ຫາກເຫັນວ່າບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ ໜ່ວຍງານກວດສອບຄຸນນະພາບຜະລິດຕະພັນວັດຖຸມີຄ່າ ປະຈຳດ່ານເຂົ້າ-ອອກ ຕ້ອງເຮັດບົດບັນທຶກ ເພື່ອໂຈະຊົ່ວຄາວ ການນຳເຂົ້າ ແລະ ສົ່ງອອກ ຜະລິດຕະພັນວັດຖຸມີຄ່າ ພ້ອມທັງລາຍງານໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຊາບ ແລະ ພິຈາລະນາແກ້ໄຂ;

5. ແຈ້ງສະພາບການ, ເຫດການ ຫຼື ຂະບວນການຕ່າງໆ ທີ່ພົວພັນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ທີ່ບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ ໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບ;

6. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານກວດສອບ ແລະ ຢັ້ງຢືນຄຸນນະພາບຜະລິດຕະພັນວັດຖຸມີຄ່າ ໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງ ປະຈຳເດືອນ ແລະ ປະຈຳປີ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມມາດຕະຖານ ແລະ ວັດແທກ ເປັນເຈົ້າການປະສານສົມທົບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ໜ່ວຍງານກວດສອບ ແລະ ຢັ້ງຢືນຜະລິດຕະພັນວັດຖຸມີຄ່າ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 28 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສິບຫ້າວັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ບ. ຈັນສຸກ ແສງພະຈັນ